**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ

ຫ້ອງການກະສິກຳ ແລະ ປ່າໄມ້

ເລກທີ:..202.../ຫກປມ.ຫຼບ

ຫຼວງພະບາງ, ວັນທີ: 15 / 3 /2023

# ແຈ້ງການ

**ເຖິງ:** ບັນດາຫົວໜ່ວຍທຸລະກິດກະສິກຳ, ບໍລິສັດສົ່ງເສີມການຜະລິດກະສິກຳເປັນສິນຄ້າ, ຜູ້ສະໜອງປັດໃຈການຜະລິດກະສິກຳ ແລະ ຜູ້ເກັບຊື້ຜົນຜະລິດກະສິກຳ ໃນຂອບເຂດນະຄອນຫຼວງພະບາງ

**ເລື່ອງ:** ການສະໝັກຍື່ນຄຳຮ້ອງເພື່ອຂໍທຶນສົມທົບສຳລັບພັດທະນາທຸລະກິດກະສິກຳ ຈາກໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD ນະຄອນຫຼວງພະບາງ.

- ອີງໃສ່: ສັນຍາເງິນກູ້ຢືມຈາກກອງທຶນ ສາກົນ ເພື່ອການພັດທະນາກະສິກຳ **IFAD** ເລກທີ: 2000003089.
- ອີງໃສ່: ເລກທີ 034 ກະຊວງການເງິນວ່າດ້ວຍການຈັດຊື້-ຈັດຈ້າງ ໃຫ້ຖືກຕ້ອງຕາມລະບຽບຫຼັກການ.
- ອີງໃສ: ແຜນວຽກ ແລະ ງົບປະມານປະຈຳປີ 2023.

ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD ປະຈຳນະຄອນຫຼວງພະບາງ ເປັນໂຄງການສົ່ງເສີມການຜະລິດກະສິກຳຂອງຄົວເຮືອນຂະໜາດນ້ອຍເພື່ອເປັນສິນຄ້າໂດຍມີການເຊື່ອມໂຍງກັບຕະຫຼາດ. ໂຄງການດັ່ງກ່າວມີຈຸດປະສົງເພື່ອປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ໂດຍເລີ່ມຈາກການຜະລິດເພື່ອຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການໄປສູ່ການຜະລິດເປັນສິນຄ້າ. ກອງທຶນສົມທົບສຳລັບ ພັດທະນາທຸລະກິດກະສິກຳແມ່ນເປັນໜຶ່ງໃນບັນດາກົນໄກການຈັດຕັ້ງປະຕິບັດໂຄງການທີ່ມີເປົ້າໝາຍເພື່ອເຮັດໃຫ້ຕ່ອງໂສ້ມູນຄ່າຂອງກິດຈະກຳທີ່ໂຄງການສະໜັບສະໜູນໄດ້ເຂົ້າເຖິງຕະຫຼາດໂດຍຜ່ານການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນໃຫ້ແກ່ຫົວໜ່ວຍທຸລະກິດກະສິກຳທີ່ຕິດພັນກັບກຸ່ມກະສິກອນ ແລະ ຊຸມຊົນເປົ້າໝາຍຂອງໂຄງການເພື່ອຮັບປະກັນການເຂົ້າເຖິງຕະຫຼາດ, ການມີຕະຫຼາດຮອງຮັບທີ່ດີກວ່າເກົ່າ ແລະ ປັບປຸງການເຂົ້າເຖິງບໍລິການຂອງພາກທຸລະກິດ.

ເພື່ອເປັນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ຫ້ອງການກະສິກຳ ແລະ ປ່າໄມ້ ນະຄອນຫຼວງພະບາງ ໃນນາມເປັນຈຸດໃຈກາງໃນການປະສານງານຂອງໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ ຂໍຖືເປັນກຽດແຈ້ງມາຍັງບັນດາຫົວໜ່ວຍທຸລະກິດກະສິກຳທີ່ມີການສົ່ງເສີມການຜະລິດເປັນສິນຄ້າຊາບວ່າ ປັດຈຸບັນທາງໂຄງການໄດ້ມີການສະໜອງທຶນສົມທົບເພື່ອພັດທະນາທຸລະກິດກະສິກຳ.

- **ສໍາລັບນະຄອນຫຼວງພະບາງ ປ່ອຍທຶນສົມທົບຫົວໜ່ວຍທຸລະກິດກສິກກໍາ ຂະໜາດກາງ ຈໍານວນ 02-03 ຫົວໜ່ວຍ.**

**ເງື່ອນໄຂຫົວໜ່ວຍທຸລະກິດກະສິກໍາມີດັ່ງນີ້:**

- ມີຄວາມສົນໃຈຢາກເຮັດວຽກຮ່ວມກັບໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFAD .
- ຫົວໜ່ວຍທຸລະກິດມີການຈົດທະບຽນທີ່ຖືກຕ້ອງຕາມກົດໝາຍ.
- ຫົວໜ່ວຍທຸລະກິດມີໃບແຈ້ງເສຍອາກອນ ແລະ ໃບຢັ້ງຢືນການເສຍອາກອນ.
- ຫົວໜ່ວຍທຸລະກິດມີການດໍາເນີນກິດຈະການຫຼາຍກວ່າ 02 ປີຂື້ນໄປ.
- ຫົວໜ່ວຍທຸລະກິດມີຄວາມສາມາດ, ປະສົບການໃນການສົ່ງເສີມທຸລະກິດກະສິກໍາ ແລະ ການເຊື່ອມໂຍງກະສິກອນສູ່ຕະຫຼາດ (ການເຊັນສັນຍາເກັບຊື້ຜົນຜະລິດກັບກຸ່ມຜະລິດທີ່ໂຄງການໄດ້ໃຫ້ການສະໜັບສະໜູນສ້າງຕັ້ງຂື້ນ).

ໄລຍະເວລາການປະກາດ 14 ວັນ, ເລີ່ມແຕ່ວັນທີ...16.....ຫາ...30/ມີນາ/2023

ສະນັ້ນ, ຫ້ອງການກະສິກໍາ ແລະ ປ່າໄມ້ ຈຶ່ງອອກແຈ້ງການສະບັບນີ້ເຖິງບັນດາຫົວໜ່ວຍທຸລະກິດກະສິກໍາ, ບໍລິສັດສົ່ງເສີມການຜະລິດກະສິກໍາເປັນສິນຄ້າ, ຜູ້ສະໜອງປັດໃຈການຜະລິດກະສິກໍາ ຜູ້ທີ່ມີຄວາມສົນໃຈເພື່ອສະໝັກຂໍທຶນສົມທົບນໍາໂຄງຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) PICSA-IFA ສາມາດພົວພັນ ແລະ ຂໍຂໍ້ມູນລາຍລະອຽດ ກ່ຽວກັບ ຂັ້ນຕອນ ແລະ ເງື່ອນໄຂການສະໝັກຂໍທຶນໄດ້ທີ່ຫ້ອງການປະສານງານໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍນະຄອນຫຼວງພະບາງ ໃນວັນ ແລະ ເວລາລັດຖະການ.

.

**ຫົວໜ້າຫ້ອງການກະສິກໍາ ແລະ ປ່າໄມ້ ນະຄອນຫຼວງພະບາງ**

(ຜູ້ປະສານງານໂຄງການ ຊກຂ ຂັ້ນນະຄອນ)

ຫ້ອງການ ກະສິກໍາ ແລະ ປ່າໄມ້ ນະຄອນ-ຫຼວງພະບາງ

ດອນງຽມ ຄໍາມີພົນ

ຜູ້ປະສານງານໂຄງການ ຊກຂ ຂັ້ນນະຄອນ
ເບີໂທຕິດຕໍ່: 020 55685692
ທີ່ປຶກສາພັດທະນາໂຄງການ ຊກຂ ແຂວງຫຼວງພະບາງ
ເບີໂທຕິດຕໍ່: 020 59745656